ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ທະນາຄານແຫ່ງ ສປປ ລາວ

ເລກທີ 976 /ທຫລ

ນະຄອນຫລວງວຽງຈັນ, ວັນທີ 10 NOV 2016

## ຂໍ້ຕົກລົງ

## ວ່າດ້ວຍຄ່າບໍລິການຂອງທະນາຄານ ແຫ່ງ ສປປ ລາວ

- ອີງຕາມກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ ສະບັບເລກທີ 05/ສພຊ ລົງວັນທີ 14 ຕຸລາ 1999;
- ອີງຕາມມາດຕາ 11 ຂອງກົດລະບຽບ ວ່າດ້ວຍການບໍລິຫານທຸລະກິດເງິນຕາຕ່າງປະເທດຂອງທະນາຄານແຫ່ງ ສປປ ລາວ ສະບັບເລກທີ 03/ທຫລ, ລົງວັນທີ 28 ທັນວາ 2000;
- ອີງຕາມທິດຊີ້ນຳຂອງທ່ານຜູ້ວ່າການ ທະນາຄານແຫ່ງ ສປປ ລາວ ຄັ້ງວັນທີ 15 ກັນຍາ 2016.

### ຜູ້ວ່າການທະນາຄານແຫ່ງ ສປປ ລາວ ອອກຂໍ້ຕົກລົງ

**ມາດຕາ 1** ການເກັບຄ່າບໍລິການຂອງທະນາຄານແຫ່ງ ສປປ ລາວ ເຊິ່ງມີລາຍລະອຽດລຸ່ມນີ້:

**I. ຄ່າບໍລິການຄຸ້ມຄອງດ້ານບັນຊີ**

1. ການອອກໜັງສືຢັ້ງຢືນເງິນຝາກ — 20.000 ກີບ/ຄັ້ງ/ບັນຊີ.
2. ຄ່າພິມບັນຊີສຳຮອງ(A/C Statement)
   - ຈຳນວນ 1-15 ໃບ — 10.000 ກີບ/ຄັ້ງ/ເດືອນ/ບັນຊີ;
   - ຈຳນວນ 16-30 ໃບ — 20.000 ກີບ/ຄັ້ງ/ເດືອນ/ບັນຊີ;
   - ຈຳນວນ 31-50 ໃບ — 30.000 ກີບ/ຄັ້ງ/ເດືອນ/ບັນຊີ;
   - ຈຳນວນ 51 ໃບຂຶ້ນໄປ — 50.000 ກີບ/ຄັ້ງ/ເດືອນ/ບັນຊີ.

**ໝາຍເຫດ:** ສຳລັບບັນຊີລູກຄ້າສິນເຊື່ອ ແລະ ບັນຊີເງິນບິນຜ່ານຂອງກະຊວງການເງິນທີ່ຕິດຕາມຢູ່ກົມບໍລິການທະນາຄານແມ່ນຍົກເວັ້ນຄ່າທຳນຽມໃນການພິມບັນຊີສຳຮອງ, ສ່ວນບັນຊີສຳຮອງເງິນບິນຜ່ານຢູ່ຕ່າງປະເທດຈະຕ້ອງໄດ້ເສຍຄ່າທຳນຽມຕາມການຮຽກເກັບຕົວຈິງຂອງທະນາຄານຕ່າງປະເທດ.

**II. ຄ່າບໍລິການການໂອນເງິນ**

**1. ຄ່າບໍລິການໂອນເງິນເຂົ້າ-ອອກຕ່າງປະເທດຜ່ານ SWIFT**

**1.1. ການໂອນເງິນອອກຕ່າງປະເທດ:**

- **ການໂອນຜ່ານຂໍ້ຄວາມ (MT 103):**
  - ສຳລັບກະຊວງການເງິນແມ່ນໄດ້ຮັບການຍົກເວັ້ນຄ່າທຳນຽມ;
  - ສຳລັບທະນາຄານທຸລະກິດ ແລະ ພາກສ່ວນອື່ນໆຈະຕ້ອງໄດ້ເສຍຄ່າທຳນຽມດັ່ງນີ້:

1./ ຄ່າທຳນຽມໃນການໂອນ 300.000 ກີບ/ທຸລະກຳ;

2./ ຄ່າທຳນຽມຕໍ່ມູນຄ່າໂອນ 0.075%/ມູນຄ່າໂອນອອກ/ທຸລະກຳ.

**ໝາຍເຫດ**: ຕ່ຳສຸດ 50.000 ກີບ, ສູງສຸດ 5.000.000 ກີບ ແລະ ອາດຈະມີຄ່າທຳນຽມທີ່ທະນາຄານຕົວແທນຢູ່ຕ່າງປະເທດເກັບເພີ່ມຕື່ມ.

- **ການໂອນຜ່ານຂໍ້ຄວາມ (MT 202)**
  - ສຳລັບທະນາຄານທຸລະກິດ
    - ຄ່າທຳນຽມໃນການໂອນ 300.000ກີບ/ທຸລະກຳ;
    - ຄ່າທຳນຽມຕໍ່ມູນຄ່າໂອນ ຍົກເວັ້ນ.

**ໝາຍເຫດ:** ກະຊວງການເງິນ ແລະ ພາກສ່ວນອື່ນໆ ບໍ່ສາມາດໂອນເງິນຜ່ານ MT 202 ໄດ້.

1.2. **ການໂອນເງິນເຂົ້າມາຈາກຕ່າງປະເທດ**:

- **ການໂອນຜ່ານຂໍ້ຄວາມ (MT 103)**
  - ສຳລັບກະຊວງການເງິນແມ່ນໄດ້ຮັບການຍົກເວັ້ນຄ່າທຳນຽມ;
  - ທະນາຄານທຸລະກິດ ແລະ ພາກສ່ວນອື່ນໆ 0.05%/ມູນຄ່າໂອນເຂົ້າ/ທຸລະກຳ.

**ໝາຍເຫດ:** ຕ່ຳສຸດ 50.000 ກີບ, ສູງສຸດ 3.000.000 ກີບ ແລະ ອາດຈະມີຄ່າທຳນຽມທີ່ທະນາຄານຕົວແທນຢູ່ຕ່າງປະເທດເກັບເພີ່ມຕື່ມ.

- **ການໂອນຜ່ານຂໍ້ຄວາມ (MT 202)**
  - ສຳລັບທະນາຄານທຸລະກິດ
    - ຄ່າທຳນຽມໃນການໂອນ 300.000ກີບ/ທຸລະກຳ;
    - ສ່ວນຄ່າທຳນຽມຕໍ່ມູນຄ່າໂອນ ຍົກເວັ້ນ.

**ໝາຍເຫດ:** ກະຊວງການເງິນ ແລະ ພາກສ່ວນອື່ນໆ ບໍ່ສາມາດໂອນເງິນຜ່ານ MT 202 ໄດ້.

2. **ຄ່າບໍລິການອອກໃບສັ່ງຈ່າຍບ້ວງເງິນຊ່ວຍເຫຼືອລ້າຈາກລັດຖະບານຍີ່ປຸ່ນ**

- ອອກ A/P (Authorization to pay)

  ສຳລັບບ້ວງ Grand Aid for Project 0,12% ມູນຄ່າ A/P+25.000 ເຢັນ;

- ອອກ BDA (Blanket Disbursement Authorization)

  ສຳລັບບ້ວງ Grant Aid for Project 0,12% ມູນຄ່າ BDA+25,000 ເຢັນ.

**ໝາຍເຫດ:** ບັນດາກະຊວງ ແລະ ໂຄງການຕ່າງໆ ຈະຕ້ອງຈ່າຍຄ່າທຳນຽມດັ່ງກ່າວຂ້າງເທິງເປັນເງິນກີບ ໂດຍນຳໃຊ້ອັດຕາຂາຍ ກີບ/ເຢັນ ພາຍໃນ 30 ວັນນັບແຕ່ມື້ ທຫລ ອອກ A/P ຫລື BDA,

ຖ້າບໍ່ຈ່າຍຕາມກຳນົດເວລາ ທຫລ ຈະຄິດໄລ່ອັດຕາດອກເບ້ຍ 5%/ປີ (ກຳນົດໜຶ່ງປີເທົ່າກັບ 360 ວັນ).

3. **ຄ່າໂອນເງິນໄປຕ່າງແຂວງໂດຍໃຊ້ໂທລະສານ, ແຟັກ** 15.000 ກີບ/ຄັ້ງ.
4. **ໂອນເງິນໃຫ້ອົງການຈັດຕັ້ງສາກົນເຂົ້າບັນຊີໃຫ້ລູກຄ້າຢູ່ ສປປ ລາວ** 30.000 ກີບ/ຄັ້ງ.
5. **ຄ່າໂອນເງິນຈາກບັນຊີກະແສລາຍວັນກັບຄືນເຂົ້າບັນຊີເງິນແຮຝາກບັງຄັບ (ກໍລະນີທະນາຄານທຸລະກິດບໍ່ເປັນເຈົ້າການໃນການໂອນເງິນ)** 0,1% ຂອງຈຳນວນເງິນທີ່ນຳໃຊ້/ຄັ້ງ.

**III. ຄ່າບໍລິການສູນຊຳລະສະສາງ**

1. ຄ່າສະມາຊິກຢູ່ສູນກາງ 2.000.000 ກີບ/ປີ.
2. ຄ່າສະມາຊິກຢູ່ສາຂາ 2.000.000 ກີບ/ປີ.

**IV. ຄ່າບໍລິການຂໍກວດຄືນ ຫລື ສຳເນົາເອກະສານຍ້ອນຫລັງ**

- ຕໍ່າກວ່າ 1 ປີ 20.000 ກີບ/ຄັ້ງ/1 ລາຍການ;
- ເກີນ 1 - 3 ປີ (ກໍລະນີສາມາດສະໜອງໄດ້) 100.000 ກີບ/ຄັ້ງ/1 ລາຍການ;
- ເກີນ 3 - 5 ປີ (ກໍລະນີສາມາດສະໜອງໄດ້) 200.000 ກີບ/ຄັ້ງ/1 ລາຍການ;
- ເກີນ 5 - 10 ປີ (ກໍລະນີສາມາດສະໜອງໄດ້) 300.000 ກີບ/ຄັ້ງ/1 ລາຍການ.

**V. ຄ່າປັບໄໝໃນການຍົກເລີກສັນຍາຕ່າງໆ**

- ສັນຍາຊື້ - ຂາຍຝາກເງິນຕາຕ່າງປະເທດ ( FX Swaps) 2%ຂອງຈຳນວນເງິນຕາຕ່າງປະເທດທີ່ຂໍຍົກເລີກ;
- ສັນຍາຊື້ - ຂາຍຄືນເງິນຕາຕ່າງປະເທດ 2%ຂອງຈຳນວນເງິນຕາຕ່າງປະເທດທີ່ຂໍຍົກເລີກ;
- ສັນຍາຊື້ - ຂາຍເງິນຕາຕ່າງປະເທດລ່ວງໜ້າ (Forward Contracts) 2%ຂອງຈຳນວນເງິນຕາຕ່າງປະເທດທີ່ຂໍຍົກເລີກ;
- ສັນຍາຊື້ - ຂາຍຝາກພັນທະບັດ 2%ຂອງຈຳນວນເງິນທີ່ຂໍຍົກເລີກ.

**VI. ຄ່າເອກະສານຕ່າງໆ**

- ຄ່າປຶ້ມແຊັກ (1 ຫົວມີ 20 ໃບ) 40.000 ກີບ/ຫົວ;
- ໃບມອບສິດໂອນເງິນ 60.000 ກີບ/ຫົວ;
- ໃບຂໍຖອນເງິນ 20.000 ກີບ/ຫົວ.

**ມາດຕາ 2** ຂໍ້ຕົກລົງສະບັບນີ້ໃຊ້ປ່ຽນແທນຂໍ້ຕົກລົງສະບັບເລກທີ 86/ທຫລ, ລົງວັນທີ 08/02/2008; ຂໍ້ຕົກລົງສະບັບເລກທີ 711/ທຫລ, ລົງວັນທີ 07/09/2009 ແລະ ຂໍ້ຕົກລົງສະບັບເລກທີ 664/ທຫລ, ລົງວັນທີ 02/09/2015 ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ**

ທະນາຄານແຫ່ງ ສ.ປ.ປ ລາວ
ຜູ້ວ່າການ